# ສືບຕໍ່ບໍລິການປິ່ນປົວສຸຂະພາບ ໃຫ້ປະຊາຊົນເຂດຊົນນະບົດ



● ຄະນະແພດຈາກໂຮງໝໍແຂວງອຸດົມໄຊ ແລະ ມູນນິທິຟື້ນຟູສຸຂະພາບລາວ (LRF) ສົມທົບຄະນະແພດຈາກໂຮງໝໍເມືອງງາ ລົງເຄື່ອນໄຫວບໍລິການກວດ ແລະ ປິ່ນປົວແຂ້ວ ຫູ-ດັງ-ຄໍ ຕາ ແມ່ມານ ຜູ້ໃຫຍ່ ແລະ ເດັກນ້ອຍ ໂດຍບໍ່ໄດ້ເສຍຄ່າ ເພື່ອແນໃສ່ຫຼຸດຜ່ອນອັດຕາແຜ່ກະຈາຍຂອງພະຍາດຫູໜວກ ແຂ້ວແມງ ຕາບອດ ແລະ ອັດຕາການຕາຍຂອງແມ່ມານ ແລະ ເດັກນ້ອຍ ເຮັດໃຫ້ການບໍລິການຮັກສາສຸຂະພາບໃຫ້ທົ່ວເຖິງໃນເຂດຫ່າງໄກສອກຫຼີກ ທັງເປັນການປັບປຸງການບໍລິການຢູ່ສຸກສາລາໃຫ້ດີຂຶ້ນ ໂດຍການສະໜອງເຄື່ອງມື-ອຸປະກອນການແພດທີ່ຈຳເປັນໃຫ້ແກ່ສຸກສາລາດັ່ງກາວ.

ການລົງເຄື່ອນໄຫວໄດ້ດຳເນີນແຕ່ວັນທີ 23-26 ພຶດສະພາ 2017 ຢູ່ສຸກສາລາບາຊານ ເມືອງງາ ແຂວງອຸດົມໄຊ ໂດຍໄດ້ບໍລິການກວດ ແລະ ປິ່ນປົວທັງໝົດ 1.568 ຄົນ ຍິງ 833 ຄົນ ໃນນີ້ ໄດ້ກວດ ແລະ ປິ່ນປົວແຂ້ວ 167 ຄົນ ພະຍາດ ຫູ-ດັງ-ຄໍ 84 ຄົນ ພະຍາດຕາ 187 ຄົນ ຜ່າຕັດແກ່ນຕາຂຸ້ນ 9 ຄົນ ຜ່າຕັດອື່ນໆ 2 ຄົນ ແຈກແວ່ນຕາ 9 ຄູ່ ກວດແມ່ມານ 21 ຄົນ ກວດພະຍາດທົ່ວໄປໃຫ້ຜູ້ໃຫຍ່ ແລະ ປິ່ນປົວ 620 ຄົນ ກວດ ແລະ ປິ່ນປົວສຸຂະພາບເດັກນ້ອຍ 292 ຄົນ ພ້ອມນີ້ຍັງໄດ້ປ້ອງກັນແຂ້ວແມງ ໂດຍການສິດສອນວິທີຖູແຂ້ວ ແຈກຢາຍໄມ້-ຢາຖູແຂ້ວ ແລະ ອຸປະກອນການຮຽນໃຫ້ນັກຮຽນປະຖົມ 196 ຄົນຕື່ມອີກ.

ກິດຈະກຳຄັ້ງນີ້ເປັນຄັ້ງທີ 7 ທີ່ໄດ້ເຄື່ອນໄຫວຢູ່ຂັ້ນສຸກສາລາທີ່ຂຶ້ນກັບແຂວງອຸດົມໄຊ ການບໍລິການແມ່ນແນໃສ່ຊ່ວຍກວດ ແລະ ປິ່ນປົວສຸຂະພາບໃຫ້ປະຊາຊົນເຂດຊົນນະບົດທີ່ມີຄວາມຕ້ອງການ ໂດຍກິດຈະກຳໄດ້ຮັບການສະໜັບສະໜູນຈາກ LRF ສ ອາເມຣິກາ ແລະ ທຶນສົມທົບປິ່ນປົວຕາຈາກ Fred Hollows Foundation ອົດສະຕຣາລີ ລວມມູນຄ່າ 12.940 ໂດລາສະຫະລັດ ຫຼື ປະມານ 106 ລ້ານກີບ.